D159701

# ເຕີບໃຫຍ່ຂື້ນ
# ໃຕ້ຮົ່ມທຸງປະຕິວັດ

## 1949 - 1979

Box 323

# ເຕີບໃຫຍ່ຂື້ນ
# ໃຕ້ຮົ່ມທຸງປະຕິວັດ

1949 – 1979

Box 323

# ເຕີບໃຫຍ່ຂື້ນ ໃຕ້ຮົ່ມທຸງປະຕິວັດ

## 1949 – 1979

ກອງທັບປົດປ່ອຍປະຊາຊົນລາວ 1979



ສະຫາຽ ໄກສອນ ພົມວິຫານ ເລຂາທິການໃຫຍ່, ພັກປະຊາຊົນປະຕິວັດລາວ ຜູ້ຈັດຕັ້ງນຳພາ ແລະ ບັນຊາກອງທັບລາວອິດສະລະໃນເມື່ອກ່ອນ, ກອງທັບປົດປ່ຽປະຊາຊົນລາວໃນປະຈຸບັນ.



ສະຫາຍ ສຸພານຸວົງ ປະທານປະເທດ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ກຳມະການກົມການເມືອງ ສູນກາງພັກປະຊາຊົນປະຕິວັດລາວ, ປະທານສະພາປະຊາຊົນສູງສຸດ.



ສະຫາຍ ຄຳໄຕ ສີພັນດອນ ກຳມະການກົມການເມືອງສູນກາງພັກ ປະຊາຊົນປະຕິວັດລາວ, ເລຂາຄະນະພັກການທະຫານສູນກາງ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ, ຜູ້ບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ.



ກອງປະຊຸມໃຫຍ່ຄັ້ງທີ່ສອງ ໄດ້ເລືອກຕັ້ງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ,
ຊຶ່ງເປັນລູກຕຸ້ມປະ ເສີດຂອງປະຊາຊົນລາວ, ປະຈຳບັນພ້ອມກາຄັນທາງນຳພາການປະຕິວັດລາວ.



ວັນທີ່ 2 ທັນວາ ປີ 1975 ຊຶ່ງເປັນວັນຢຸດຕິລະບອບສັກດີນາ ແລະ ລ່າເມືອງຂຶ້ນໃນທົ່ວປະເທດ, ໄຂສັງກາດໃໝ່, ສັງກາດແຫ່ງຄວາມເປັນເອກະລາດ ອິດສະລະພາບ. ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ເລືອກຕັ້ງລັດຖະບານສາທາລະນະລັດປະຊາທິປະໄຕປະຊາຊົນລາວຂຶ້ນ ເພື່ອຈັດຕັ້ງຊີ້ນຳປະຊາຊົນລາວໃນໄລຍະໃໝ່ຂອງການປະຕິວັດ.

ແຜນທີ່ປະເທດລາວ.



- ປະເທດລາວ ມີປ່າໄມ້ນາໆຊະນິດ.
- ມີບໍ່ແຮ່, ບໍ່ຖ່ານ ທີ່ມີຄຸນຄ່າສູງ.
- ມີຫຼາຍສິບແກ້ງ ແລະ ຕາດທີ່ສາມາດ ສ້າງເປັນບ່ອນກຳເນີດໄຟຟ້ານ້ຳຕົກ.
- ມີທົ່ງພຽງ, ພູພຽງ, ເປັນບ່ອນປຸກຝັງ ລ້ຽງສັດ.

# ປະເທດລາວຮັ່ງມີສວຍງາມ

ຊາດລາວ, ຄົນລາວ, ປະຊາຊົນລາວດຸໝັ່ນຂະຫຍັນ ແລະ ມີມູນເຊື້ອອັນພິລະອາດຫານບໍ່ຍອມຈຳນົນ, ຊາດລາວເຮົາໄດ້ກຳເນີດຂະຫຍາຍຕົວເຕີບໃຫຍ່ຢູ່ໃນອານາບໍລິເວນດິນແດນອຸດົມຮັ່ງມີເຫຼົ່ານີ້ມາຕັ້ງສອງພັນກວ່າປີແລ້ວ. ຊາດລາວເຮົາກໍຄືຊາດອື່ນໆໃນໂລກ ຍາມໃດກໍມີຄວາມປາຖະໜາອັນແຮງກ້າ ຢາກມີຊີວິດຢູ່ໃນຄວາມສະຫງົບສຸກ, ເອກະລາດ ແລະ ອິດສະລະພາບ. ກ່ອນໜ້ານີ້ 600 ( ຫົກຮ້ຽ ) ປີ ໃນສະໄໝເຈົ້າຟ້າງຸ່ມ ປະຊາຊົນໄດ້ເຊີດຊູນານະຈິດ ເອກະລາດ, ເອກະພາບແລະພັດທະນາປະເທດລາວຂຶ້ນ. ແຕ່ນັ້ນມາ ຜ່ານແຕ່ລະໄລຍະປະຫວັດສາດ, ນານະຈິດດັ່ງກ່າວໄດ້ຮັບການຊຸບຫລໍ່ນັບມື້ແຮງກ້າ ແລະ ເຂັ້ມຂຸ້ນ ກາຽເປັນມູນເຊື້ອອັນພິລະອາດຫານ ທົນທານໜຽວແໜ້ນຕ້ານກັບການຮຸກຮານພາຽນອກ, ເຊັ່ນໃນສະໄໝ ເຈົ້າໄຊເສດຖາ, ສະໄໝ ເຈົ້າອະນຸວົງ, ສະໄໝ ພໍ່ກະດວດ, ອົງແກ້ວ, ກົມມະດຳ, ເຈົ້າຟ້າປັດໃຈ ແລະ ອື່ນໆອີກ. ດ້ວຽນານະຈິດຕໍ່ສູ້ປົກປັກຮັກສາເອກະລາດ, ອະທິປະໄຕຂອງປິຕຸພູມ, ດ້ວຽນານະຈິດອອກແຮງງານຂະຫຍັນພາກພຽນ ແລະປະດິດຄິດສ້າງປະຊາຊົນລາວບັນດາຊົນຊາດ ແລະ ເຜົ່າຊົນ ໄດ້ສ້າງປະຫວັດສາດຂຶ້ນ ແລະກໍສ້າງປະເທດຊາດ, ສ້າງຊີວິດອັນຢູ່ຊຸ່ມກິນເຢັນ ແລະ ຄວາມສຸກ.

ແຕ່ວ່າ ປະເທດຊາດຂອງພວກເຮົາ ຍາມໃດກໍຖືກອິດທິກຳລັງຂອງພວກລ່າເມືອງຂຶ້ນ, ປະຕິການຕ່າງດ້າວຈ້ອງມອງ ແລະ ບຸກລຸກຮຸກຮານ. ດ້ວຽເຫດນັ້ນ ປະຊາຊົນລາວເຮົາຈຶ່ງທຳການຕໍ່ສູ້ຢູ່ສະເໝີ ເພື່ອປ້ອງກັນຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງຕົນ.



1 — ວັດຖຸໂບຮານ ທາດຫຼວງວຽງຈັນ.



2 — ບັນດາທົ່ງພຽງ ດິນດານຫຼຸ່ມ ເປັນເຫຼົ່າ ເຫົ່າການກະເສດ.



3 — ທັດສະນີຍະພາບທາງທຳມະຊາດອັນສວຍສົດງົດງາມ,ທັງອຸດົມໄປດ້ວຍ ປ່າໄມ້,ສັດປ່າ, ບໍ່ແຮ່ທີ່ມີລາຄາ ແລະ ທົ່ງນາລ້າເຊີ່ງເປັນເຫຼົ່າການເບິ່ງໃນຟ້າ ແລະ ທັງເປັນທາງຄົມມະນາຄົມທີ່ສະດວກດີອີກດ້ວຍ.



4 — ວັດຖຸໂບຮານ ໄຫຫີນ ຢູ່ພູພຽງຊຽງຂວາງ.



5 — ເຍ່ນ້ຳຂອງມີຄອນພະເພັງ ຢູ່ພາກໃຕ້ຂອງລາວ.



6 — ປະເທດລາວມີ ໓ ຊົນຊາດອ້າຍນ້ອງ ໖໐ ກ່ວາເຜົ່າຊົນ ຊຶ່ງເຄີຍມີມູນເຊື້ອບໍ່ຍອມຈໍານົນ
ແລະ ດຸໝັ່ນຂະຫຍັນພຽນ.



7 — ຕາດເສັດ ຢູ່ພາກໃຕ້ຂອງລາວ.



8 — ທະຫານຂອງອົງແກ້ວ, ອົງກົມມະດຳ ໃນຂະບວນຮັກຊາດ ຕ້ານພວກລ່າເມືອງຂຶ້ນຝະລັ່ງ
( ປີ 1905 - 1936 ).



9 — ໃຕ້ແອກປົກຄອງຂອງພວກລ່າເມືອງຂຶ້ນຝະລັ່ງ ປະຊາຊົນລາວຕົກທຸກໄດ້ຍາກຢ່າງແສນສາຫັດ.

ຕະຫຼອດ 30 ປີ, ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກຄອມມູນິດອິນດູຈີນໃນເມື່ອກ່ອນ ແລະ ພັກປະຊາຊົນປະຕິວັດລາວໃນປະຈຸບັນ, ປະຊາຊົນລາວບັນດາຊົນຊາດ ໄດ້ລຸກຂຶ້ນຕໍ່ສູ້ຕີໃຫ້ຈັກກະພັດຝະລັ່ງ ແລະຈັກກະພັດອາເມລິການຸກຮານປະລາໄຊຢ່າງອັບອາຍຂາຍໜ້າ, ຄົ້ນລົ້ມລະບອບສັກດີນາທີ່ເໜົ່າເພັນ, ປົດປ່ອຍປະເທດຊາດ ແລະ ປະຊາຊົນຢ່າງສົມບູນ, ເຮັດໃຫ້ປະເທດຊາດເປັນເອກະລາດ, ປະຊາທິປະໄຕ ແລະ ພວມກ້າວຂຶ້ນສັງຄົມນິຍົມ.



 ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ່ສອງ ຂອງພັກປະຊາຊົນ ປະຕິວັດລາວ ( 2/1972 )



11 — ກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ.



12 — ກອງປະຊຸມເປີດກ້ວາງຂອງຄະນະພັກການທະຫານສູນກາງ.

ພາຍໃຕ້ການນຳພາຂອງພັກຄອມມູນິດອິນດູຈີນ ( ຊຶ່ງເປັນພັກປະຊາຊົນປະຕິວັດລາວໃນປະຈຸບັນ ) ເດືອນ 8 ປີ 1945 ປະຊາຊົນລາວບັນດາຊົນຊາດ ໄດ້ລຸກຂຶ້ນຍຶດອຳນາດຈາກກຳມືຂອງຟາສິດຍີ່ປຸ່ນ ແລະ ປະກາດເອກະລາດ ເມື່ອວັນທີ່ 12 ຕຸລາ ປີ 1945 ຢ່າງມີໄຊ.

ການຍຶດອຳນາດບໍ່ໄດ້ພໍເທົ່າໃດ, ປະຊາຊົນລາວກໍໄດ້ດຳເນີນການຕໍ່ສູ້ຕ້ານກັບພວກລ່າ ເມືອງຂຶ້ນຝະລັ່ງ ທີ່ໄດ້ຮັບການຊ່ວຍໜູນຈາກສຳພັນທະມິດຂອງມັນ ກັບຄືນມາຮຸກຮານປະເທດລາວເທື່ອທີ່ສອງ.



13 — ເຮືອນຫຼັງນີ້ ເປັນບ່ອນປະກາດເອກະລາດ ວັນທີ່ 12 ຕຸລາ 1945



14 — ຄະນະລັດຖະບານລາວຕໍ່ຕ້ານ.

ຜ່ານການກໍ່ສ້າງ, ສູ້ຮົບ ແລະ ເຮັດວຽກງານຕະຫຼອດໄລຍະ 30 ປີ ພາຍໃຕ້ການນຳພາເດັດຂາດໂດຍກົງ ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ, ກອງທັບປົດປ່ອຍປະຊາຊົນລາວ ໄດ້ກາຍເປັນກອງທັບປະຕິວັດຂອງປະຊາຊົນລາວຜູ້ອອກແຮງງານຢ່າງແທ້ຈິງ, ໄດ້ຮັບຄວາມຮັກແພງເຊື່ອໝັ້ນຈາກປະຊາຊົນບັນດາຊົນຊາດ, ໄດ້ຮັບການຍົກຍ້ອງຈາກສູນກາງພັກ ວ່າ: " ກອງທັບປົດປ່ອຍປະຊາຊົນລາວ ສົມແລ້ວເປັນກອງທັບພິລະອາດຫານຂອງຊາດລາວຜູ້ພິລະອາດຫານ ".

ປະຈຸບັນ, ກອງທັບປົດປ່ອຍປະຊາຊົນລາວ ສືບຕໍ່ເສີມຂະຫຍາຍມູນເຊື້ອອັນສະຫງ່າອົງອາດຂອງຕົນ, ອອກແຮງປັບປຸງກໍ່ສ້າງຕົນໃຫ້ກາຍເປັນກອງທັບປະຕິວັດແບບແຜນທັນສະໄໝເປັນກ້າວໆ, ຕັ້ງໜ້າເຮັດທຸກສິ່ງທຸກຢ່າງ ເພື່ອປົກປັກຮັກສາປະເທດຊາດ, ເຂົ້າຮ່ວມໃນການສ້າງສາປະເທດຊາດສັງຄົມນິຍົມ. ນັ້ນແມ່ນໜ້າທີ່ອັນໜັກໜ່ວງມີກຽດສະງ່າງາມທີ່ສຸດ.



15 — ວັນທີ 20 ເດືອນ 1 ປີ 1949, ທ່ານ ໄກສອນ ພົມວິຫານ ອ່ານຄຳປະກາດ ສ້າງຕັ້ງກອງລາດຊະວົງ.

ເຖິງປີ 1949 ປີນຕໍ່ໜ້າເລ່ກິນເພີ່ມທະວີສົງຄາມຮຸກຮານຂອງພວກລ່າເມືອງຂຶ້ນຝຣັ່ງ ແລະ ຂະບວນການຕໍ່ສູ້ປະຕິວັດລາວນັບວັນໄດ້ເປີດກວ້າງ, ມັນຮຽກຮ້ອງໃຫ້ມີກຳລັງປະກອບອາວຸດອັນເຂັ້ມແຂງມີການຈັດຕັ້ງນຳພາ, ບັນຊາເປັນເອກະພາບເພື່ອເປັນຫຼັກແຫຼ່ງຊຸກດັນໃຫ້ສົງຄາມປະຊາຊົນໄປເຖິງໄຊຊະນະຢ່າງວ່ອງໄວ. ດັ່ງນັ້ນສູນກາງພັກຄອມມູນິດອິນດູຈີນຈຶ່ງໄດ້ຕົກລົງໃຫ້ສ້າງຕັ້ງກອງທັບລາວອິດສະລະ ຂຶ້ນເປັນທາງການເຊິ່ງແມ່ນກຳລັງປະກອບອາວຸດປະຕິວັດຂອງປະຊາຊົນລາວບັນດາຊົນຊາດອັນແທ້ຈິງ. ວັນທີ່ 20 ເດືອນ 1 ປີ 1949 ກອງລາດຊະວົງຊຶ່ງເປັນກອງທຳອິດ ທີ່ໄດ້ຮັບການປະກາດສ້າງຕັ້ງຂຶ້ນເປັນທາງການຢູ່ແຫ່ງໜຶ່ງໃນເຂດທີ່ໝັ້ນແຂວງຫົວພັນ ໂດຍແມ່ນທ່ານໄກສອນ ພົມວິຫານເປັນຜູ້ປະກາດສ້າງຕັ້ງ ແລະບັນຊາ. ຕໍ່ຈາກນັ້ນກອງທັບປົດປ່ອຍປະຊາຊົນລາວໄດ້ເຕີບໃຫຍ່ເຂັ້ມແຂງ ແລະສູ້ຮົບຍາດໄດ້ໄຊຊະນະຢ່າງບໍ່ຢຸດຢັ້ງ.



16 — ກອງລາດຊະວົງ.



17 — ທັດຈາກກອງລາດຊະວົງ, ຍັງມີກອງໄຊຈັກກະພັດ, ກອງຟ້າງຸ່ມ, ກອງໄຊເສດຖາ
ແລະ ກອງອື່ນໆໄດ້ຮັບການສ້າງຕັ້ງຂຶ້ນເປັນທາງການຢ່າງຕໍ່ເນື່ອງກັນ.

18 — ບັນດາໜ່ວຍກອງຫຼອນກໍ່ໄດ້ເຕົ້າໂຮມເພື່ອກະກຽມຈັດຕັ້ງເປັນກອງກຳລັງຫຼວງ.



19 — ເຄື່ອນທັບເຂົ້າປົດປ່ຽຊຳເໜືອ ໃນລະດູແລ້ງ 1952-1953.



20 — ໜຶ່ງໃນບັນດາໜ່ວຍກອງຫຼອນແຫ່ງຕ່າງໆເຄື່ອນໄຫວສົມທົບບັ້ນຣົບ
ປົດປ່ຽຊຳເໜືອ 1952-1953.



ຂະບວນການສົງຄາມປະຊາຊົນຕ້ານຈັກກະພັດຝລັ່ງຜູ້ຮຸກຮານນັບວັນນັບຍາດໄດ້ໄຊຊະນະໃຫຍ່ຫຼວງນັ້ນໄດ້ມີກອງທັບປົດປ່ຽປະຊາຊົນລາວເປັນກຳລັງຫຼັກແຫຼ່ງ. ປີ 1953–1954 ສົມທົບກັບບັ້ນລົບດຽນບຽນຟູ ຢູ່ຫວຽດນາມ, ກອງທັບປົດປ່ຽປະຊາຊົນລາວໂດຍມີການຊ່ວຍເຫຼືອຂອງກອງທັບອາສາສະຫມັກຫວຽດນາມໄດ້ປົດປ່ຽຫນຶ່ງສ່ວນສອງຂອງດິນແດນ ແລະຫນຶ່ງສ່ວນສາມຂອງພົນລະເມືອງໃນທົ່ວປະເທດ ປະກອບສ່ວນບັງຄັບຈັກກະພັດຝລັ່ງຕ້ອງຍອມເຊັນສັນຍາເຊີແນວ ຟື້ນຟູສັນຕິພາບຢູ່ອິນດູຈີນກໍ່ຄືຢູ່ລາວ.



21 — ສະເລີຍເສິກທີ່ຈັບໄດ້ໃນບັ້ນຮົບປົດປ່ຽຊຳເຫນືອ1952–1953.

ປະຕິບັດສັນຍາເຊີແນວປີ 1954 ບັນດາກຳລັງປະກອບອາວຸດຂອງພວກເຮົາຂຶ້ນເຕົ້າໂຮມຢູ່ສອງແຂວງ ( ຊຳເໜືອ ແລະ ຜົ້ງສາລີ ) ເພື່ອປັບປຸງກໍ່ສ້າງຕົນເອງ ແລະປະກອບສ່ວນປັບປຸງກໍ່ສ້າງເຂດເຕົ້າໂຮມ,ແຕ່ພວກຈັກກະພັດ ແລະລູກແຫຼ້ອຕົນມີຫວັງຢາກກືນກິນສອງແຂວງເຕົ້າໂຮມ,ກອງທັບປົດປ່ອຍປະຊາຊົນລາວທັງປັບປຸງກໍ່ສ້າງ, ທັງສູ້ຮົບປົກປັກຮັກສາສອງແຂວງເຕົ້າໂຮມຍາດໄດ້ໄຊຊະນະໃຫຍ່ຫຼວງ.

ເຖິງປີ 1957 ເພື່ອຜົນປະໂຫຍດອັນສູງສົ່ງຂອງປະເທດຊາດ,ກອງທັບປົດປ່ອຍປະຊາຊົນລາວໃຊ້ພຽງແຕ່   ກອງພັນເຂົ້າຮ່ວມປອງດອງຊາດ,ສ່ວນຫຼວງຫຼາຍໄດ້ລົງໄປສູ່ພື້ນຖານປະຊາຊົນເພື່ອສືບຕໍ່ຂົນຂວາຍປະຕິວັດ.



22 — ກອງທັບປົດປ່ຽປະຊາຊົນລາວຂຶ້ນເຕົ້າໂຮມຢູ່ຊຳເໜືອ 1954.



໒໓ — ໃນກອງປະຊຸມນັກຮົບແຂ່ງຂັນທົ່ວປະເທດຄັ້ງທີໜຶ່ງ, ປະທານສຸພານຸວົງ ລົງມອບຫຼຽນໄຊໃຫ້ສະຫາຽ
ສີທອງ ພ້ອມດວຽພະນັກງານ ນັກຮົບຜູ້ທີ່ມີຜົນງານດີເດັ່ນໃນການຕານພວກລ່າເມືອງຂຶ້ນຝຼັ່ງ ແລະ
ປົກປັກຮັກສາສອງແຂວງເຕົ້າໂຮມ.



25 — ໄປຄຽງຄູ່ກັບການສູ້ຮົບຂົນ
ຂວາຍສ້າງພື້ນຖານປະຊາຊົນຍັງ
ໄດ້ຍາດເວລາເພີ່ມພູນຜະລິດຜົນ.





24 — ສວນສະໜາມໃນງານມະໂຫລານຂອງຊາດຢູ່ໃນເຂດເຕົ້າໂຮມ ( ຊຳເໜືອ 1956 ).



26 — ສະຫາຍສີທອງ ວິລະຊົນພວມບັນຊາກົມກອງສູ້ຮົບໃນສະໜາມຮົບແຫ່ງໜຶ່ງເພື່ອປົກປັກຮັກສາເຂດເຕົ້າໂຮມ.

ປະຕິບັດການປອງດອງຊາດບໍ່ທັນພໍເທົ່າໃດ, ຈັກກະພັດອາເມລິກາ ແລະລູກມືຂອງມັນ ພັດກຽມກໍ່ສົງຄາມ, ປາບປາມບັນດານັກຕໍ່ຕ້ານ, ຈັບບັນດາສະຫາຽຜູ້ນຳຂອງພັກ ແລະ ແນວລາວຮັກຊາດ, ໃຊ້ການຊື້ຈ້າງຈອບອຽຫຼອກລວງແຊກຊູມເພື່ອມາບຂູ່ ແລະ ຫວັງ ຈະດັບສູນບັນດາກຳລັງທີ່ເປັນຕົວແທນຂອງກຳລັງປະກອບອາວຸດປະຕິວັດ, ຊື້ຈ້າງຫຼອກ ລວງມາບຂູ່ບໍ່ໄດ້ແລ້ວ, ຮອດເດືອນ 5 ປີ 1959 ສັດຕູມີເລ່ກົນໃຊ້ກຳລັງໃຫຽ່ຫລວງ ປິດລ້ອມເພື່ອດັບສູນບັນດາກຳລັງທີ່ເປັນຕົວແທນຂອງການປະຕິວັດ. ຢືນຕໍ່ໜ້າສະພາບ ການແນວນັ້ນ, ບັນດາກຳລັງທີ່ເປັນຕົວແທນຂອງພວກເຮົາ ໄດ້ມີແຜນການມ້າງວົງປິດ ລ້ອມຂອງສັດຕູກັບໄປສູ່ເຂດທີ່ໝັ້ນພ້ອມກັບປວງຊົນປະຕິບັດແຜນນະໂຍບາຽຫັນທິດຕໍ່ສູ້ ດ້ວຽອາວຸດຂອງສູນກາງພັກເພື່ອຕ້ານການຮຸກຮານຂອງຈັກກະພັດອາເມລິກາແລະລູກ ມືປິດປ່ຽປະເທດຊາດ.



27 — ຄຸກເລກທີ 11 ຂອງຈັກກະພັດອາເມລິກາ ແລະ ລູກມື
ທີ່ໄດ້ຂັງບັນດາຜູ້ນຳຂອງພັກ ແລະແນວລາວຮັກຊາດ.



28 — ປະຕິບັດຄຳຮຽກຮ້ອງຂອງປະເທດຊາດ ແລະ ບໍ່ຍອມຈຳນົນສັດຕູ, ກອງພັນທີ 2 ໄດ້ ເດັດດ່ຽວຜ່າວົງປິດລ້ອມອັນແໜ້ນໜາຂອງສັດຕູຢູ່ທົ່ງໄຫຫີນຊຽງຂວາງຢ່າງມີໄຊ.

29 — ຈັກກະພັດອາເມລິກາປະຕິບັດກົນອຸບາຍປາບປາມຈັບກຸມປະຊາຊົນເຮົາ.





30 — ຈັກກະພັດອາເມລິກາຜູ້ຮຸກຮານພວມຂຸ້ນຂ້ຽວດຳເນີນກົນອຸບາຍຮຸກຮານລາວຄືນໃໝ່.



31 — ປະຕິບັດຕາມມະຕິທັນທີດຕໍ່ສູ້, ບັນດາຜູ້ນຳສູນກາງພັກ ແລະແນວລາວຮັກຊາດ
ໄດ້ອອກໄປສູ່ເຂດທີ່ຫມັ້ນ.



32 — ພາຍຫຼັງຫັນທິດຕໍ່ສູ້ ສະຫາຍໄກສອນ ພົມວິຫານ ລົງແນະນຳອົບຮົມພະນັກງານເພື່ອ
ຍູ້ການຕໍ່ສູ້ຂຶ້ນຢ່າງກວ້າງຂວາງແຂງແຮງ.

ໂດຍປະຕິບັດມະຕິຫັນທິດຕໍ່ສູ້ດ້ວຍອາວຸດຂອງສູນກາງພັກ, ໄປພ້ອມກັບຂະບວນການຕໍ່ສູ້ການເມືອງອັນຟົດເດືອດໃນທົ່ວປະເທດ, ກຳລັງປະກອບອາວຸດທັງ  ປະເພດໄດ້ຂະຫຍາຍຕົວຢ່າງວ່ອງໄວ, ສົມທົບກັບການຢຶດອຳນາດເປັນແຕ່ລະພາກສ່ວນ ຂອງປະຊາຊົນ, ບັນດາກຳລັງປະກອບອາວຸດເຮົາໄດ້ຕີດັບສູນບັນດາປົດຄ້າຍຂອງສັດຕູໃຫ້ແຕກຫະລາຍເປັນປ່ຽງໆ ເຮັດໃຫ້ສັດຕູຊຸດໂຊມອ່ອນເພັຍ, ພາຍໃນຂັດແຍ່ງ, ກ້າວໄປເຖິງມີການລັດຖະປະຫານຂອງນາຍ ແລະພົນທະຫານຝ່າຍຂວາໃນວັນທີ 8/9/1960, ໃນໄລຍະນັ້ນບັນດາຜູ້ນຳຂອງການປະຕິວັດ ແລະ ພະນັກງານຢູ່ບັນດາທ້ອງຖິ່ນໄດ້ໂຕນອອກຈາກຄຸກກັບໄປສູ່ຖານທີ່ໝັ້ນສືບຕໍ່ນຳພາການປະຕິວັດ. ຈາກນັ້ນກະແສສູງແຫ່ງການຕໍ່ສູ້ປະກອບອາວຸດໄດ້ຟົດຟື້ນໃນທົ່ວປະເທດ, ກອງທັບ ແລະປະຊາຊົນເຮົາຍາດໄດ້ໄຊຊະນະອັນໃຫຍ່ຫຼວງ, ປົດປ່ອຍສາມສ່ວນຫ້າຂອງດິນແດນ ແລະ ປົດປ່ອຍພົນລະເມືອງເກືອບເຄິ່ງໜຶ່ງຂອງປະເທດ, ບັງຄັບສັດຕູຕ້ອງຍອມເຊັນສັນຍາເຈນີວປີ 1962 ກ່ຽວກັບລາວ, ສ້າງຕັ້ງລັດຖະບານປະສົມສາມຝ່າຍ.

ແຕ່ສັນຍາປີ 1962 ເຊັນກັນບໍ່ພໍເທົ່າໃດ, ຈັກກະພັດອາເມລິກາໄດ້ລົງມືຊ່ວຍພວກຫຸ່ນລາວປະຕິບັດເລ່ກົນກໍ່ສົງຄາມຮຸກຮານອັນສຸດທີ່ໂຫດຮ້າຍປ່າເຖື່ອນ. ຈາກນັ້ນພາຍໃຕ້ການນຳພາອັນສະຫຼາດຂອງພັກ, ກອງທັບແລະປະຊາຊົນລາວຕັດສິນໃຈຕີເອົາຊະນະຈັກກະພັດອາເມລິກາຜູ້ຮຸກຮານເພື່ອຄວາມເປັນເອກະລາດແຫ່ງຊາດ, ປະສານສົມທົບກັບຂະບວນການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນຫວຽດນາມ ແລະກຳພູຊາອ້າຍນ້ອງ, ບັນດາກຳລັງການປະຕິວັດເວົ້າລວມ, ກອງທັບປົດປ່ອຍປະຊາຊົນລາວເວົ້າສະເພາະໄດ້ດຳເນີນສົງຄາມປະຊາຊົນຢ່າງອົງອາດກ້າຫານ, ໃນຂະບວນການສົງຄາມປະຊາຊົນກອງທັບປົດປ່ອຍປະຊາຊົນລາວ ໄດ້ຕີໃຫ້ບັນດາຍຸດທະສາດແຫ່ງທິດສະດີນິກເຊີນ, ທັບມ້າງບັນດາບັ້ນຮົບນ້ອຍ, ໃຫຍ່ ທີ່ພວກມັນກໍ່ຂຶ້ນຄື:

ນ້ຳທາ, ນ້ຳບາກ, ທົ່ງໄຫຫີນ, ທາງເລກ 9 , ຜາທີ, ນາຄັງ ແລະ ແຫ່ງອື່ນໆ. ໄດ້ຍິງ ແລະທຳລາຍຍົນຂອງຈັກກະພັດອາເມລິການັບເປັນພັນລຳ ໃນນັ້ນນັບທັງຍົນຍຸດທະສາດຂອງພວກມັນ, ໄດ້ຕີກອງທະຫານເລວຮັບຈ້າງ ( ຫຸ່ນວຽງຈັນ, ກຳລັງພິເສດວັງປາວ ) ນັບວັນຊຸດໂຊມອ່ອນເພຍເປື່ອຍລ່ອຍ ແລະ ແຕກທະລາຍ, ຕີໃຫ້ກອງທະຫານໄທເລວຮັບຈ້າງ ແລະກອງທະຫານຫຸ່ນໄຊ່ງ່ອນເຈັບໜັກ.

33 — ເຖິງວ່າການຕໍ່ສູ້ຈະດຸເດືອດ ວຽກງານຈະຫຽ້ງຍາກສັບສົນ, ຜູ້ນຳຍາມໃດກໍ່ໄດ້ລົງໃກ້
ຊິດຕິດແທດ. ລົງປຸກລະດົມບັນດາກຳລັງປະກອບອາວຸດຢູ່ສະເໝີ.





34 — ສະຫາຽໜູຮັກ ພູມສະຫວັນ ກົມການເມືອງສູນກາງພັກລົງຢ້ຽມຢາມທະຫານກອງ ໜຶ່ງ.



35 — ສະຫາຽພູນ ສີປະເສີດ ກົມການເມືອງສູນກາງພັກ ແລະ ສະຫາຽສະໝານ ວິຍະເກດ ກຳມະການສູນກາງພັກ, ຄະນະພັກການທະຫານສູນກາງ ລົງໂອ້ລົມປຸກລະດົມກົມກອງທະຫານທີ່ພວມຈະເຄື່ອນທັບອອກສູ່ແນວໜ້າ.



36 — ໜຶ່ງໃນບັນດາກອງປະຊຸມວາງແຜນສູ້ຮົບຂອງຄະນະພັກທະຫານສູນກາງ.



37 — ກອງທະຫານລາບສ້າງຄວາມຕັດສິນໃຈເຂົ້າສູ່ສະໜາມຮົບ.

38 — ກອງລົດຕັ່ງກຽມເຂົ້າສູ່ສະໜາມ.



39 — ຫນຶ່ງໃນຂະບວນການຕໍ່ສູ້ການເມືອງຂອງປະຊາຊົນ.





40 — ກອງຫຼອນພູພຽງຊຽງຂວາງກະກຽມສູ້ຮົບສົມທົບກັບກຳລັງຫຼວງ ໃນບັ້ນຮົບຕາງໆເຂດພູພຽງຊຽງຂວາງ.

41 — ທະຫານທ້ອງຖິ່ນ ແລະ ກອງຫຼອນລວມໝູ່ເຂດເໜືອ ເຄື່ອນໄຫວສົມທົບບັ້ນຮົບນີ້ ຕໍ່ບັ້ນຮົບໃໝ່.





42 — ບັ້ນຮົບປົດປ່ອຍທົ່ງໄຫຫີນຊຽງຂວາງ 1960

43 — ເຄື່ອນທັບເຂົ້າປົດປ່ອຍຫຼວງນ້ຳທາ





44 — ເພື່ອຍາດເອົາທ່າເປັນເຈົ້າການ

ກ່ອນວັນເຊັນສັນຍາເຊີແນວປີ 1962 ກ່ຽວກັບລາວ, ກອງຮ້ອຍທີ 15 ຂອງ ກອງພັນທີສອງ ໄດ້ໃຊ້ຄວາມອົງອາດ ກ້າຫານວ່ອງໄວແລ່ນຜ່ານບັນດາທີ່ຕັ້ງ ຂອງສັດຕູເຂົ້າປັກຫຼັກຫຼວງຢູ່ເບື້ອງຫຼັງສັດ ຕູ ( ທີ່ອົວທິນ ເຕີບ) ເພື່ອເຮັດໃຫ້ເຂດ ປົດປ່ອຍກວ້າງອອກໄປຕື່ມ 30 ກວ່າກິໂລ ແມັດ.



45 — ພູຍູດຈອມເຫຼັກ.



46 — ບຶ້ນຣິບນ້ຳບາກ.



47 — ບັ້ນຣົບຜາທີ.





48 — ບັ້ນຣົບນາດັງ.







49 — ປ້ອງກັນເມືອງວຽງໄຊ.



50 — ກອງບັນຊາການສູງສຸດລົງຊີ້ນຳບັ້ນຮົບ
ພູກຽດ.





51 — ຕີເອົາຊະນະບັ້ນຮົບກູ້ກຽດ.





52 — ກອງຫຼອນຜູ້ຍິງ 12,8 m , m ເມືອງແປກໃນການຕ້ານປົ້ນຣົບກູ້ກຣດ.



53 — ທະຫານທ້ອງຖິ່ນ ແລະ
ກອງຫຼອນຊຽງຂວາງສົມທົບ
ກັບທະຫານຫຼວງປົດປ່ອຍທົ່ງໄຫ
ຫີນໃນປົ້ນຕ່າວໂຈມຕີດັບສູນປົ້ນ
ຣົບກູ້ກຣດ 1969



54 — ສົມທົບກັບກຳລັງໄຟ ປືນໃຫຽ່, ລົດຖັ່ງ, ທະ ຫານລາບໄດ້ວ່ອງໄວ ແລະ ອາດຫານ ລອດ ເຂົ້າດັບສູນກອງບັນຊາ ການຂອງສັດຕູຢູ່ທົ່ງໄຫ ຫີນໃນບັ້ນຮົບກູ້ກຽດຢ່າງ ມີໄຊ.



55 — ບັ້ນຮົບກູ້ກຽດຖືກປະລາໄຊ. ທົ່ງໄຫຫີນ - ຊຽງຂວາງໄດ້ຮັບການປົດປ່ຽໃນລະດູ ແລ້ງ 1969-1970



56 — ຕີເອົາຊະນະບັ້ນ
ຣົບລາມເຊີນ 719







57 — ຕີຊະນະບັ້ນຮົບລາມເຊີນ 719 ຢູ່
ທາງເລກ 9 ເດືອນ 9
ປີ 1970





58 — ບຸກໂຈມຕີສະໜາມບິນເມືອງສຸ້ຽ.



59 — ບຸກໂຈມຕີທີ່ຕັ້ງຂອງສັດຕູ, ປົດປ່ຽບໍລິເວນເຂດພູພຽງບໍລະເວນ.



60 — ບຸກໂຈມຕີທີ່ຕັ້ງຂອງສັດຕູ, ປົດປ່ອຍບໍລິເວນນາໂອນ້າຍູ້ພາກເໜືອຂອງລາວ.

61 — ຫຼອນໂຈມຕີດ້ວຍປືນໃຫຍ່ເຂົ້າສະໜາມບິນເຊໂນ.





62 — ເຈາະຖ້ຳສ້າງສະຖານທີ່ເຮັດວຽກງານຂອງອົງການກອງບັນຊາການສູງສຸດ.
( ທີ່ວຽງໄຊ ).

63 — ຮັບປະກັນການບັນຊາລຶງລຮ່ມດິ.





64 — ຮີບປະກັນເສັ້ນທາງອອກໃຫ້ແນວຫນ້າ.



65 — ກອງລົດຍົນຂອງກອງບັນຊາການ ຂົນສົ່ງອອກໄປແນວຫນ້າ.

66 — ປະຊາຊົນລ້ອງນ້ຳອູ່ໃຊ້ເຮືອລຳລຽງຂົນສົ່ງຮັບໃຊ້ແນວໜ້າ.





67 — ສຳນັກງານອົງການລຳລຽງຂົນສົ່ງຮັບໃຊ້ແນວໜ້າ.



68 — ປະຊາຊົນພາກໃຕ້ໃຊ້ຊ້າງລຳລຽງຂົນສົ່ງຮັບໃຊ້ແນວໜ້າ.

69 — ສື່ສານຂອງກອງບັນຊາການສູງສຸດ.





70 — ໂຮງໝໍ 102 ກອງທັບປົດປ່ອຍປະຊາຊົນລາວ.



71 — ໂຮງງານສ້ອມແປງອາວຸດ.



72 — ໂຮງງານສ້ອມແປງລົດຍົນ.



73 — ທັງກຽມພ້ອມສູ້ຮົບທັງເພີ່ມພູນ.







74 — ກອງທັບກັບປະຊາຊົນດືປາກັບນ້ຳ.

75 — ຍາດເວລາຮ່ຳຮຽນ.



ກຳຕ້ອງສະໜອງດ້ວຍກຳ, ເຈດຈຳນົງຂອງຈັກກະພັດອາເມລິກາແມ່ນຢາກດັບມອດການປະຕິວັດ, ພວກເຂົາໄດ້ກໍ່ໂຫດກຳເຫຼືອຟ້າລົ້ນແຜ່ນດິນຕໍ່ປະຊາຊົນລາວ. ແຕ່ຜົນທີສຸດພວກເຂົາກໍ່ຕ້ອງຕົກຢູ່ໃນຊາຕາກຳປະລາໄຊຢ່າງອັບອາຍຂາຍໜ້າ. ຈາກການປະລາໄຊຈົນຕາແຈ, ພວກເຂົາຕ້ອງຍອມເຊັນສັນຍາປີ 1973 ຢຸດເຊົາສົງຄາມຮຸກຮານຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ.





76 — ປະຊາຊົນລາວຈະບໍ່ຫຼົງລືມເປັນຈັກເທື່ອຕໍ່ໂທດກຳອັນລົ້ນຟ້າເໜືອແຜ່ນດິນທີ່ຈັກກະພັດ
ອາເມລິກາ ແລະ ລູກມືກໍ່ຂຶ້ນຢູ່ປະເທດຊາດ ແລະ ປະຊາຊົນລາວພວກເຮົາ.









77 — ຮູບພາບ ພາຍຫຼັງການຍິງທຳລາຍກອງທັບອາກາດອາເມລິກາບັ້ນໜຶ່ງລົງໃສ່ເຂດປົດປ່ອຍ.

78 — ນັກບິນແອຟ 105 ຂອງໂຈນອາກາດອາເມລິກາຖືກຍິງຕົກຢູ່ວຽງໄຊ-ແຂວງຊຳເໜືອ.



79 — ທະຫານຝ່າຍຂວາວຽງຈັນລູກມືຂອງອາເມລິກາຖືກຈັບເປັນສະເລີຍເສິກ.





໘໐ — ກຳລັງພິເສດວາງປາວມືແຂງຂອງອາເມລິກາໃນສົງຄາມພິເສດຖືກຈັບເປັນສະເລີຍ.







81 — ທະຫານເລວຮັບຈ້າງໄທ,
ໄຕຫວັນ ກໍຖືກຈັບເປັນສະ
ເລີຽເສິກເປັນຈຳນວນຫຼາຽ.



82 — ທະຫານຫຸ່ນໄຊງ່ອນລູກມືທີ່ເອົາການເອົາງານທີ່ສຸດຂອງຈັກກະພັດອາເມລິກາ ກໍ່ຕອງກົ້ມຫົວຍອມເປັນສະເລີຽເສິກ ຂອງກອງທັບປົດປ່ຽປະຊາຊົນລາວ.















83 — ເຂົ້າມາຢູ່ຄ້າຍດັດສ້າງຈຶ່ງມີເວລາໃຫ້ພວກສະ
ເລີຍເສິກນອນຄິດ ແລະຕື່ຕາຂຶ້ນເຫັນໄດ້ເສັ້ນ
ທາງແຫ່ງໂທດກຳແລະການປະລາໄຊຢ່າງຊົ້ນ
ເຊີງຂອງພວກຮຸກຮານແລະລູກມື.









84 —
ປ້ອມຄ້າຽຂອງສັດຕູ
ໄດ້ກາຽເປັນກອງ
ຂີ້ດິນຮ້າງ, ພາຫະ
ນະອາວຸດຂອງ-
ພວກມັນໄດ້ກາຽ
ເປັນກອງເສດ
ເຫຼັກ.













85 — ເຮືອບິນແອຟ 105 ຂອງໂຈນ
ອາກາດອາເມລິກາຖືກຍິງຕົກ
ດ້ວຍປືນເຫຼັກຍາວ ຢູ່ແຂວງ
ຊຽງຂວາງ.





# ຜົນງານຕ້ານພວກ
# ແລະຈັກກະພັດອາເ

<u>ໄລຍະ 8-9 ປີຕ້ານພວກລ່າເມືອງຂຶ້ນຝະລັ່ງ 1945-1954.</u>

| | | |
|---|---|---|
| ປົດເຊັ່ຽສັດຕູອອກຈາກວົງສູ້ຮົບ | 35.071 | ຄົນ. |
| ໃນນັ້ນ ຂ້າຕາຽ | 20.761 | ຄົນ. |
| ບາດເຈັບ | . 6.865 | ຄົນ. |
| ຈັບ ແລະ ຍອມ | 7.445 | ຄົນ. |
| ໃນຈໍານວນສັດຕູທີ່ຖືກປົດເຊັ່ຽອອກຈາກວົງສູ້ຮົບນັ້ນ ມີ: | | |
| ທະຫານຫຸ່ນລາວ | 31.264 | ຄົນ. |
| ທະຫານຝະລັ່ງ | 3.807 | ຄົນ. |
| ຍຶດ ແລະ ທໍາລາຽປືນຕ່າງໆ | 14.335 | ກະບອກ. |
| ທໍາລາຽລົດຕ່າງໆ | 110 | ຄັນ. |

<u>ໄລຍະ 20 ປີ ຕ້ານຈັກກະພັດອາເມລິກາ 1955-1975.</u>

| | | |
|---|---|---|
| ປົດເຊັ່ຽສັດຕູອອກຈາກວົງສູ້ຮົບ | 231.258 | ຄົນ. |
| ໃນນັ້ນ ຂ້າຕາຽ | 138.082 | ຄົນ. |
| ບາດເຈັບ | 39.943 | ຄົນ. |
| ຈັບ ແລະ ຍອມ | 48.874 | ຄົນ. |
| ລູກຈີ້ຂົ້ນນາຍທາປະຊາຊົນ | 4.359 | ຄົນ. |
| ໃນຈໍານວນສັດຕູທີ່ຖືກປົດເຊັ່ຽອອກຈາກວົງສູ້ຮົບນັ້ນ ນອກຈາກທະຫານຫຸ່ນລາວແລ້ວ ຍັງມີຈັກກະພັດຮຸກຮານ | | |
| ແລະ ບໍລິວານ | 369 | ຄົນ. |
| ທະຫານຫຸ່ນໄຊງ່ອນ | 15.861 | ຄົນ. |
| ທະຫານປະຕິການໄທ | 11.119 | ຄົນ. |
| ທໍາລາຽ ແລະ ຍຶດປືນຊະນິດຕ່າງໆ | 77.359 | ກະບອກ. |
| ທໍາລາຽ ແລະ ຍິງຍົນຕົກ | 2.519 | ລໍາ. |
| ຍຶດ ແລະ ທໍາລາຽໂທລະເລກ ໂຟນ ແລະ ວິທະຍຸ | 2.750 | ເຄື່ອງ. |
| ທໍາລາຽ ແລະ ຍຶດລົດຊະນິດຕ່າງໆ | 1.885 | ຄັນ. |
| ຍິງເຮືອຈັກຈົມ ແລະ ຍຶດໄດ້ | 249 | ເຫຼັ້ມ. |
| ທໍາລາຽຂົວສໍາຄັນ | 110 | ແຫ່ງ. |
| ທໍາລາຽສາງ ແລະ ເຮືອນທະຫານ | 515 | ຫຼັງ. |
| ທໍາລາຽຈັກຣາດາ ແລະ ເຄື່ອງບັນຊາອື່ນໆ | 12 | ແຫ່ງ. |
| ຍຶດ ແລະ ທໍາລາຽອຸປະກອນສົງຄາມອື່ນໆ | 199.000 | ກ່ວາໂຕນ. |

# ວ່າເມືອງຂຶ້ນຝະລັ່ງ
# ລິກາ ແລະ ລູກມື

<u>ຜົນງານລວມ 30 ປີ</u>.

| | | |
|---|---|---|
| ສູ້ຮົບທັງນ້ອຍ ແລະ ໃຫຍ່ | 8.600 | ກ່ວາຄັ້ງ. |
| ປົດເສັ້ງສັດຕູອອກຈາກວົງສູ້ຮົບ | 266.329 | ຄົນ. |
| ໃນນັ້ນ ຂ້າຕາຍ | 158.843 | ຄົນ. |
| ບາດເຈັບ | 46.808 | ຄົນ. |
| ຈັບ ແລະ ຍອມ | 56.319 | ຄົນ. |
| ລູກຂີ້ຂົ້ນມາຫາປະຊາຊົນ | 4.359 | ຄົນ. |
| ໃນຈຳນວນສັດຕູທີ່ຖືກປົດເສັ້ງອອກຈາກວົງສູ້ຮົບນັ້ນ ນອກຈາກທະຫານຫຸ່ນລາວ ແລະ ກຳລັງພິເສດວາງປາວ ແລະ ຍັງມີທະຫານຈັກກະພັດຮຸກຮານ ແລະ ພວກບໍລິວານ | 4.176 | ຄົນ. |
| ທະຫານຫຸ່ນໄຊງ່ອນ | 15.861 | ຄົນ. |
| ທະຫານປະຕິການໄທ | 11.119 | ຄົນ. |
| ຢຶດປືນຊະນິດຕ່າງໆ | 91.694 | ກະບອກ. |
| ທຳລາຍ ແລະ ຍິງຍົນຕົກ | 2.519 | ລຳ. |
| ໃນນັ້ນ ແຕ່ 1959 – 1963 | 14 | ລຳ. |
| ແຕ່ 17/5/1964 – 18/11/1972 | 2.469 | ລຳ. |
| 6/1/1973 – 18/1/1975 | 36 | ລຳ. |
| ຢຶດ ແລະ ທຳລາຍໂທລະເລກ ໂຟນີ ແລະ ວິທະຍຸ | 2.755 | ເຄື່ອງ. |
| ຍິງເຮືອຮົບຈົມ ເພ ແລະ ຢຶດໄວ້ | 249 | ເຫຼັ້ມ. |
| ທຳລາຍຮົວສຳຄັນ | 110 | ແຫ່ງ. |
| ທຳລາຍສາງ ແລະ ເຮືອນທະຫານ | 515 | ຫຼັງ. |
| ທຳລາຍຈັກຮາວາ ແລະ ບັນດາຈັກບັນຊາອື່ນໆ | 12 | ແຫ່ງ. |
| ຢຶດແລະທຳລາຍອຸປະກອນສົງຄາມ ແລະ ອື່ນໆ | 200.000 | ກ່ວາໂຕນ. |
| ຢຶດ ແລະ ທຳລາຍລົດຊະນິດຕ່າງໆ | 1.995 | ຄັນ. |

ພາຍຫຼັງຢຶດອຳນາດມາມືປະຊາຊົນໃນທົ່ວປະເທດ ເມື່ອວັນທີ່ 23/8/75 ແລ້ວ ພວກເຮົາໄດ້ລົບລ້າງການຈັດຕັ້ງທາງທະຫານ. ກຳລັງທະຫານ ແລະ ພາຫະນະສົງຄາມທັງໝົດທີ່ເປັນເຄື່ອງຂອງຈັກກະພັດອາເມລິກາ.

ຍ້ອນຖືກປະລາໄຊອ່ອນເພຽໃນຮອບດ້ານ, ຈັກກະພັດອາເມລິກາ ແລະລູກມືຈຶ່ງຍອມເຊັນສັນຍາ ແລະ ອານຸສັນຍາວຽງຈັນ, ແຕ່ເມື່ອເຊັນແລ້ວພວກມັນກໍຊອກທຸກວິທີຂັດຂວ້າງນາງເພ ແລະ ລະເມີດສັນຍາຢ່າງເປີດແປນ, ຢ່າງມີແຜນການ ແລະ ເປັນສາຍໃຍ. ໂດຍເສີມຂະຫຍາຍມູນເຊື້ອທາດແທ້ປະຕິວັດ ແລະປະຕິບັດພາລະບົດບາດຂອງຕົນ, ກອງທັບເຮົາໄດ້ສືບຕໍ່ບຸກສັດຕູຢ່າງແຂງແຮງ, ເຄື່ອນທັບເຂົ້າສອງຕົວເມືອງ, ວຽງຈັນ ແລະ ຫຼວງພະບາງຢ່າງມີໄຊ,ສົມທົບກັບກຳລັງຢູ່ເຂດປົດປ່ອຍແລະການຕໍ່ສູ້ຂອງປະຊາຊົນໃນທົ່ວປະເທດບີບບັງຄັບໃຫ້ສັດຕູຕອງຍອມປະຕິບັດສັນຍາແລະອານຸສັນຍາໃຫ້ປະກົດເປັນຈິງ ເປັນກາວໆ.





86 — ປະຕິບັດຕາມສັນຍາ ແລະ ອານຸສັນຍາວຽງຈັນ 27-2 — 15 — 9 — 1973. ກຳລັງປະກອບອາວຸດພວກເຮົາ, ໄດ້ເຂົ້າສອງຕົວເມືອງຄື: ວຽງຈັນ ແລະ ຫຼວງພະບາງ.





87 — ເຄື່ອນທັບເຂົ້າຊ່ວຍຫນູນປະຊາຊົນຫລວງພະບາງຍຶດອຳນາດຢູ່ວຽງຈັນ.



88 — ນັກຮຽນນັກສຶກສານະຄອນຫຼວງວຽງຈັນ ສົມທົບກັບແຫ່ງອື່ນໆແຫ່ຂະບວນທວງໃຫ້ປະຕິບັດສັນຍາ ແລະ ອານຸສັນຍາ, ທວງໃຫ້ຂຶດເຂັ່ຽ ແລະ ລົງໂທດພວກປະຕິການທີ່ຄັດຄ້ານມ້າງເພສັນຍາ, ອະນຸສັນຍາ.

89 — ປະທານສຸພານຸວົງ ເຂົ້ານະຄອນຫຼວງວຽງຈັນເພື່ອສ້າງຕັ້ງລັດຖະບານປະສົມ
ແລະ ຄະນະມົນຕີປະສົມການເມືອງແຫງຊາດ.





90 —
ພະສົງສາມະເນນແຫຂະບວນທວງໃຫ້ປະຕິບັດສັນຍາ ແລະ ອະນຸສັນຍາ,
ລົງໂທດພວກປະຕິການທີ່ດື້ດ້ານມ້າງເພສັນຍາ ອະນຸສັນຍາ.





91 —
ບັນດາສຳນັກງານອົງການ ພ້ອມດ້ວຍປະຊາຊົນທຸກ
ຊັ້ນວັນນະເມືອງວຽງໄຊສົມທົບກັບແຫ່ງອື່ນໆໃນທົ່ວ
ເຂດປົດປ່ອຍຈັດຕັ້ງມິດຕິງສະແດງກຳລັງຊົມເຊີຍໄຊ
ຊະນະ ແລະສະໜັບສະໜູນຂະບວນການຕໍ່ສູ້ຂອງ
ພີ່ນ້ອງຮ່ວມຊາດຢູ່ໃນເຂດຄອບຄຸມຊົ່ວຄາວຂອງສັດ
ຕູ.

ເມື່ອສະພາບການສຸກງອມແລ້ວ, ກອງທັບເຮົາກໍໄດ້ອອກໜ້າອອກຕາໃນການປະຕິບັດແຜນນະໂຍບາຍໃຊ ບາດຄ້ອນບຸກໂຈມຕີສັດຕູພ້ອມກັບປະຊາຊົນກ້າວຂຶ້ນຍຶດອຳນາດຢ່າງມີໄຊ ສຽງປືນບຸກໂຈມຕີສັດຕູຫວ່າງເດືອນ ແລະ ບັນດາການເຄື່ອນທັບຢ່າງວ່ອງໄວ ລົ່ງເຂົ້າໃສ່ກັບສຽງໂຮ້ຮ້ອງຕໍ່ສູ້ຂອງມະຫາຊົນໃນທົ່ວປະເທດ, ທັງໝົດອັນນັ້ນໄດ້ເປັນການປຸກລະດົມຂະບວນຢ່າງໃຫຍ່ຫຼວງທີ່ສຸດ ແລະ ເປັນການນາບຂູ່ສັດຕູຢ່າງແຂງແຮງ, ເຮັດໃຫ້ສັດຕູຕ້ອງຕົກສະທ້ານຢ້ານກົວ ຢ່າງບໍ່ມີຄວາມສາມາດຕ້ານທານໄດ້ ແລະຕ້ອງປົບຕາຍຢ່າງເສຍຂວັນ, ກອງທັບເຮົາໄດ້ປະສົມສ່ວນສຳຄັນເຂົ້າໃນການລົບລ້າງກຳລັງທະຫານຫຸ່ນ ແລະ ອົງການປົກຄອງຫຸ່ນໄດ້ໜູນຫຼັງຢ່າງຕັ້ງໜ້າໃຫ້ແກ່ຂະບວນການຍຶດອຳນາດຢູ່ຂັ້ນພື້ນຖານ ຈົນຮອດຂັ້ນສູນກາງ.



92 —
ບຸກໂຈມຕີເຂົ້າທີ່ຕັ້ງຂອງ
ສັດຕູຢູ່ສະລາພູຄູນ ໃຂ
ທາງໃຫ້ກຳລັງຂອງພວກ
ເຮົາເຂົ້າຊ່ວຍຫມູນ ປະ
ຊາຊົນວຽງຈັນ,ຫຼວງພະ
ບາງຍຶດອຳນາດ.









93 — ເຄື່ອນທັບເຂົ້າຊ່ວຍໜູນປະຊາຊົນສະຫວັນນະເຂດຢຶດອຳນາດ.

94 — ເຄື່ອນທັບເຂົ້າຊ່ວຍໜູນປະຊາຊົນປາກເຊຢຶດອຳນາດ.



95 — ການລຸກຮື້ຂຶ້ນຂອງນາຍ ແລະ ພົນທະຫານຝ່າຍຂວາມອບອາວຸດຂຶ້ນ
ສາວ, ເຂົ້າສຳມະນາເພື່ອການເປັນພົນລະເມືອງດິຂອງຊາດ.











96 — ມິດຕິງຢຶດອຳນາດແຂວງກຳແພງນະຄອນວຽງຈັນ 23/8/1975



97 — ໃນມິດຕິງຢຶດອຳນາດແຂວງກຳແພງນະຄອນວຽງຈັນຍັງໄດ້ຈັດໃຫ້ມີການຈູດສົບຫຸ່ນເພື່ອ
ເປັນສັນຍາຣັກແຫ່ງວັນອະວະສານສຸດທ້າຍ ຂອງພວກປະຕິການລາວຂາຍຊາດ.





98 — ສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ ອ່ານຄຳປະກາດສ້າງ
ຕັ້ງປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນວັນທີ່ 2 ທັນວາ 1975 ຕໍ່ກອງປະ
ຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ .




**99** — ໃບລາອອກຈາກພະລາດຊະບັນລັງ
ຂອງເຈົ້າສີສະຫວ່າງວັດທະນາ.



ຕາມການປ່ຽນແປງທາງດ້ານການເມືອງໃນປະເທດລາວ ທານຜູ້ຮ້ອນກົນ ລະຫວ່າງ ກໍາລັງສອງ ພູມພາກລະສຶກ ໃນລະບອບຣາຊາທິປະໄຕທີ່ກໍານົດໄວ້ໃນລັດຖະທໍາມະນູນ ແລະອຳນາດອາທິປະໄຕປະຊາຊົນກ້າວເດີນໄປບໍ່ໄດ້ ແລະສາມາດຂັດຂວາງການກ້າວເດີນທາງ ຂອງປະເທດ ໄປສູ່ຄວາມກ້າວໜ້າ .

ເພື່ອຈັດໃຫ້ການກ້າວເດີນທາງຂອງປະເທດຊາດໄປສູ່ຄວາມກ້າວໜ້າໄດ້ຢ່າງສະດວກ ສະບາຍ ເພື່ອຈັດໃຫ້ເຄາະຮ້າຍຂອງຊາດຂຶ້ນອີກ. ໃນມື້ນີ້, ດ້ວຍຄວາມຮູ້ສຶກຕົວ ຢ່າງເຕັມທີ່ ແລະດ້ວຍຄວາມສະຫວ່າງທາງໃຈ ຂ້າພະເຈົ້າຂໍສະລະລາຊະບັນລັງ ເຈົ້າໄປຂະນ້ ທີ່ຂ້າພະເຈົ້າສະລະລາຊະສົມບັດຢ່າງບໍລິສຸດໃຈ ແລະຢ່າງສິ້ນເຊີງ ປາສະຈາກຄວາມຄິດ ຜິດປິດບັງໄວ້ໃນໃຈ ແລະດ້ວຍຄວາມເຊື່ອໃສສຸດປະການ .

ຂ້າພະເຈົ້າ ມອບໃຫ້ປະຊາຊົນພົນລະເມືອງລາວ ໄດ້ກໍາລະກາຂອງປະເທດຊາດບ້ານ ເມືອງລາວ. ອີກທັງຫວັງ ອັນນີ້ໄດ້ຕັ້ງເປັນອາທິປະໄຕປະຊາຊົນທັງຄະນະຂອງປະເທດ ບ້ານເມືອງລາວ.

ໃນເມື່ອກັບມາເປັນພົນລະເມືອງທຳມະດາແລ້ວ ຂ້າພະເຈົ້າປະສົງປະຊາ ຕິດຕາມແລະສົ່ງເສີມໝົດກົນໃຈ ເພື່ອຂອງສາຍ ຂອງຊາດ ຄວາມຮູ້ກໍດີ ແລະຄວາມເຂົ້າ ໃຈສົມບູນຂອງປວງປະຊາຊົນລາວທົ່ວຊາດ ທີ່ແສງສັກສາ .

ວັງຫຼວງ ຫຼວງພະບາງ, ວັນທີ ໒໐ ພະຈິກ ໑໙໗໕




100 —
ເຈົ້າວົງສະຫວ່າງ ຕາງໜ້າໃຫ້ພໍ່ຂອງອ່ານໃບລາອອກຈາກພະລາດຊະບັນລັງ
ຕໍ່ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດໃນວັນທີ 2 ທັນວາ 1975



101 — ດອກໄຟໄຊຊະນະໄດ້ພຸ່ງຂຶ້ນສູ່ທ້ອງຟ້າຈະຄອນຫຼວງວຽງຈັນເຊິ່ງເປັນສັນຍາ
ລັກແຕ່ງປະຫວັດສາດຂອງຊາດລາວວັນທີ 2 ທັນວາ ປີ 1975

"... ຕ້ອງອອກແຮງກໍ່ສ້າງກອງທັບປົດປ່ອຍປະຊາຊົນລາວ ໃຫ້ກາຍເປັນກອງທັບປະຕິວັດແບບແຜນກ້າວຂຶ້ນທັນສະໄໝເປັນກ້າວໆ, ເປັນພາຫະນະກຳລັງຮຸນແຮງອັນຄົມແຫຼມຂອງພະເດັດການກຳມະຊີບ, ເປັນພາຫະນະກຳລັງຮຸນແຮງຂອງພັກໃນການປະຕິວັດສັງຄົມນິຍົມ..."

(ຂັດຈາກຄຳໂອລົມຕັກເຕືອນຂອງສະຫາຍໄກສອນພົມວິຫານເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວໃນກອງປະຊຸມການເມືອງທົ່ວກອງທັບຄັ້ງທີສອງ).

ໂດຍເສີມຂະຫຍາຍທາດແທ້ມູນເຊື້ອປະຕິວັດ ແລະ ລັດທິວິລະຊົນໃນຍາມສົງຄາມປົດປ່ອຍຊາດ,ກອງທັບປົດປ່ອຍປະຊາຊົນລາວໄດ້ຍົກສູງມານະຈິດບຸກບືນອັນໃຫຍ່ຫຼວງ, ເດັດດ່ຽວປະຕິບັດທຸກໜ້າທີ່ ທີ່ພັກ ແລະ ປະຊາຊົນມອບໝາຍໃຫ້.

ໃນບົດລາຍງານຂອງສະຫາຍໄກສອນພົມວິຫານກ່ຽວກັບສະພາບການ ແລະ ໜ້າທີ່ 6 ເດືອນທ້າຍປີ 1978 ສະຫາຍ ໄດ້ຕາງໜ້າສູນກາງພັກ,ສະພາປະຊາຊົນສູງສຸດ, ສະພາລັດຖະມົນຕີສະແດງຄວາມຍ້ອງຍໍສັນລະເສີນກອງທັບເຮົາ: "ຍ້ອງຍໍສັນລະເສີນຢ່າງສຸດອົກສຸດໃຈບັນດາກຳລັງປະກອບອາວຸດ ແລະ ບັນດາກຳລັງປ້ອງກັນຄວາມສະຫງົບປະຊາຊົນເຮົາທີ່ໄດ້ຈົງຮັກພັກດີສຸດຂີດຕໍ່ພາລະກິດປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດສັງຄົມນິຍົມ, ໄດ້ມີຜົນງານດີເດັ່ນຫຼາຍປະການໃນການເຄື່ອນໄຫວ ແລະ ກໍ່ສ້າງ, ໃນການຂົນຂວາຍປະຊາຊົນບັນດາຊົນຊາດ ແລະ ເຂົ້າຮ່ວມການກໍ່ສ້າງເສດຖະກິດ,ສົມກັບຄວາມໄວ້ເນື້ອເຊື່ອໃຈຂອງພັກລັດຖະບານ ແລະ ປະຊາຊົນ ".



102 — ໃນບັນດາກອງປະຊຸມພະນັກງານ ຫຼັກແຫຼ່ງຂອງກອງທັບ ສະຫາຍ ໄກສອນ ພົມວິຫານ ເລຂາທິການ ໃຫ່ຍພັກປະຊາຊົນປະຕິວັດລາວນາຍົກລັດຖະມົນຕີລັດຖະບານເຮົາເຄີຍໄດ້ໄປໂອ້ລົມຕັກເຕືອນຢູ່ບໍ່ຂາດ.



103 — ສະຫາຍ ຄຳໄຕສີພັນດອນ ກ່າວສູນທອນພິດໃນກອງປະຊຸມການເມືອງທົ່ວກອງທັບຄັ້ງທີສອງ, ໃນສູນທອນພິດໄດ້ເນັ້ນໜັກໜ້າທີ່ການເມືອງ,ການທະຫານຂອງກອງທັບໃນໄລຍະໃໝ່.



104 — ຮຽນໃຫ້ດີ,ຍິງໃຫ້ແມ່ນ; ຍາດໄດ້ຂະແນນສູງ ! ນັ້ນຄືຄຳຂວັນປະຈຳໃຈຂອງນັກຮົບ ແຕ່ລະຄົນໃນສະໜາມແອບ.



105 — ຝຶກແອບຮ່ຳຮຽນຍົກສູງຈິດໃຈ ແລະ ຄວາມສາມາດ ສູ້ຮົບແມ່ນໜຶ່ງໃນບັນດາໜ້າທີ່
ທີ່ເປັນໃຈກາງແລະສຳຄັນທີ່ສຸດຂອງກອງທັບປົດປ່ອຍປະຊາຊົນລາວ, ໃນໄລຍະໃໝ່.



106 — ກອມຕົວເຂົ້າສູ່ການຕັດແອບຂອງທະຫານລາບ.



107 — ໂຮງຮຽນທະຫານການເມືອງຊັ້ນກາງ-ຊັ້ນສູງໄດ້ເປີດການອົບຮົມບຳລຸງພະນັກງານໃນໄລຍະໃໝ່.







108 — ກຳລັງໄຟເພດຍິງ, ທະຫານຍານເກາະຝຶກແອບຮ່ຳຮຽນ.



109 — ທະຫານປືນໃຫຍ່ຫນ້າດິນ ແລະ ປ້ອງກັນອາກາດພວມຝຶກແອບຮ່ຳຮຽນ.





110 —
ທະຫານສື່ສານແປງສື່ສານ.



111 — ການຝຶກແອບຮ່ຽນຂອງທະຫານເຄມີສາດ.

112 — ຕຳລວດປ້ອງກັນແດນພວມດຳເນີນໜ້າທີ່.





113 — ຍົກສູງສະຕິລະວັງຕົວ, ລາດຕາເວັນເວນຍາມເພື່ອປ້ອງກັນການອອກແຮງງານ ໃນສັນຕິພາບຂອງປະຊາຊົນ.

114 — ຕັ້ງໜ້າຝຶກແອບຮ່ຳຮຽນຍົກສູງສະຕິລະວັງຕົວກຽມພ້ອມປົກປັກຮັກສາທ້ອງຟ້າ ແລະ ນ່ານນ້ຳອັນຫວງແຫນຂອງປະເທດຊາດ.








115 — ກອງປະຊຸມກ່ຽວກັບວຽກງານພະລາທິການໃນໄລຍະໃຫ່ມ.

116 — ໂຮງງານນ້ຳປາປາກົດ.



117 — ໂຮງງານສອັມແປງລົດຍົນ.





118 — ໂຮງໝໍ 103



119 — ສະຫາຍຄຳໄຕສີພົນດອນລົງແນະນຳການກໍ່ສ້າງກິດຈະການຊົນລະປະທານ
ນ້ຳຊວງ.











120 — ໂຮງງານຫຽິບແສ່ວຂອງກອງທັບປົດປ່ຽປະຊາຊົນລາວ.



121 — ປັບປຸງ ແລະ ຂະຫຍາຍເສັ້ນທາງຄົມມະນາຄົມ.







122 — ທັງຝຶກແອບຮ່ຳຮຽນກຽມພ້ອມສູ້ຮົບທັງຂົນຂວາຍປະຊາຊົນກໍ່ສ້າງພື້ນຖານ,
ທັງເພີ່ມພູນຜະລິດຜົນປູກຝັງລ້ຽງສັດ.





123 — ນິຄົມລ້ຽງສັດຂອງກົມພະລາທິການກອງທັບ.



124 — ປຸກລະດົມຂົນຂວາຍປະຊາຊົນກໍ່ສ້າງສະຫະກອນກະເສດ.

125 — ຝຶກຝົນຮ່າງກາຍ,ກໍ່ສ້າງກອງທັບ.



126 — ໜ່ວຍກິລາບານເຕະ ແລະ ບານສົ່ງຂອງກົມການເມືອງກອງທັບພວມແຂ່ງຂັນມິດຕະພາບກັບສາກົນ ແລະ ບັນດາໜ່ວຍກິລາບານພາຍໃນປະເທດ.









127 — ຍາມໃດກອງທັບເຮົາກໍ່ໄດ້ຮັບການອຸ້ມຊູລ້ຽງດູ, ຊ່ວຍເຫຼືອເບິ່ງແຍງ ແລະ ຢ້ຽມຢາມຖາມຂ່າວຈາກປະຊາຊົນຢູ່ສະເໝີ.



128 — ຕັດສິນໃຈກ້າວເດີນຕາມສຽງຮ້ອງຂອງປະເທດຊາດ. ( ລາຽການຂອງໜ່ວຽ ວັນນະຄະດີສະມັກຫຼິ້ນກອງໜຶ່ງ ).



129 — ຮູ້ບູນຈູນຂອງບັນດາວິລະຊົນ ໃນສົງຄາມປົດປ່ຽຊາດ. ( ລາຽ ການຂອງສິນລະປະກອນ ກົມການ ເມືອງກອງທັບປົດປ່ຽປະຊາຊົນລາວ )



ກອງທັບ ແລະ ປະຊາຊົນລາວ ຮູ້ບຸນຄຸນອັນເລິກເຊິ່ງຕໍ່ກອງທັບກັບປະຊາຊົນຫວຽດນາມ ແລະປະຊາຊົນບັນດາປະເທດສັງຄົມນິຍົມອ້າຍນ້ອງທັງຫມົດ, ບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ປະຊາຊົນຜູ້ກ້າວຫນ້າໃນໂລກທີ່ໄດ້ໃຫ້ການສະຫນັບສະຫນູນຊ່ວຍເຫຼືອອັນປະເສີດໃຫ້ຮຽວງ ແລະ ມີພົນສັກສິດໃນພາລະກິດຕໍ່ສູ້ປົດປ່ອຍຊາດຕ້ານຈັກກະພັດຜູ້ຮຸກຮານກໍ່ຄືໃນພາລະກິດປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດສັງຄົມນິຍົມຂອງຂອງກອງທັບ ແລະ ປະຊາຊົນລາວ.



130 — ປະທານ ສຸພານຸວົງ ສຳພັດມືປະທານໂຕນດຶກທັງ ໃນໂອກາດຄະນະຜູ້ແທນປະຊາຊົນລາວ ຢ້ຽມຢາມສາທາລະນະລັດສັງຄົມນິຍົມຫວຽດນາມ.



131 — ສະຫາຍ ໄກສອນພົມວິຫານໃນນາມພັກ ແລະ ລັດຖະບານສາທາລະນະລັດ
ປະຊາທິປະໄຕປະຊາຊົນລາວມອບຮູບປະທານໂຫຈິມິນ ໃຫ້ສະຫາຍເລຢວນ
ຫົວໜ້າຄະນະຜູ້ແທນພັກ ແລະ ລັດຖະບານສາທາລະນະລັດສັງຄົມນິຍົມຫວຽດ
ນາມ, ໃນໂອກາດຄະນະຢ້ຽມຢາມສືບທະວະໄມຕີສາທາລະນະລັດປະຊາທິປະໄຕ
ປະຊາຊົນລາວ.

132 — ສະຫາຍຄຳໄຕສີພັນດອນຫົວຫນ້າຄະນະຜູ້ແທນການທະຫານລາວມອບຂອງຂວັນແກ່
ສະຫາຍຫວໍ່ງຽນຢາບໃນໂອກາດຄະນະໄປຢ້ຽມຢາມສືບທະວະໄມຕີສາທາລະນະລັດ
ສັງຄົມນິຍົມຫວຽດນາມເມື່ອເດືອນ 12/9/1977



133 — ເຊັນສົນຍາມິດຕະພາບຊ່ວຍເຫຼືອ ແລະ ຮ່ວມໄມ້ຮ່ວມມືລະຫວ່າງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວກັບສາຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ..





134 — ຄະນະຜູ້ແທນການທະຫານ ແຫ່ງ ສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ ມາ ຢ້ຽມຢາມມິດຕະພາບສາທາລະນະລັດປະຊາທິປະໄຕປະຊາຊົນລາວ 29/1/1978.



135 — ໃນໂອກາດສະເຫຼີມສະຫຼອງ ວັນສະຖາປະນາ ສາທາລະນະລັດ ປະຊາ
ທິປະໄຕປະຊາຊົນລາວ ຄົບຮອບໜຶ່ງປີ ( ວັນທີ່ 2 ທັນວາ 1976 ).

